




# ຫໍເຕັນສັກສິດ

ບົດຮຽນທີ 13 ສຳລັບສະບາໂຕທີ 27, 2025





“ຕໍ່ມາເມກໄດ້ມາປົກຄຸມຫໍເຕັນ ແລະ ແສງ
ສຸກໃສແຫ່ງສະຫງ່າຣາສີຂອງອົງພຣະຜູ້ເປັນ
ເຈົ້າກໍປົກເຕັມຢູ່ທີ່ຫໍເຕັນສັກສິດນັ້ນ.
ຕະຫລອດການເດີນທາງທ່ອງທ່ຽວໄປມານັ້ນ
ພວກເຂົາໄດ້ເຫັນເມກຂອງອົງພຣະຜູ້ເປັນ
ເຈົ້າສະຖິດຢູ່ເທິງຫໍເຕັນສັກສິດໃນເວລາ
ກາງເວັນ ແລະ ໄດ້ເຫັນແສງເປັນໄຟພຸ່ງຂຶ້ນ
ເທິງຫໍເຕັນສັກສິດໃນເວລາກາງຄືນຕໍ່ໜ້າ
ພວກອິດສະຣາເອນ”

ອພຍ 40:34, 38





ໃນບົດສຸດທ້າຍຂອງພຣະທຳອົບພະຍົບໄດ້ອຸທິດໃຫ້ກັບຄຳອະທິບາຍໂດຍ ລະອຽດ ກ່ຽວກັບການກໍ່ສ້າງ ແລະ ການອຸທິດຖວາຍຫໍເຕັນ

ມີຊ່ວງເວລາທີ່ພິເສດ, ເຊິ່ງຜູ້ຄົນໄດ້ມາຮ່ວມຢ່າງມ່ວນຊື່ນ, ມີສ່ວນຮ່ວມ ຕາມທີ່ທຸກຄົນສາມາດເຮັດໄດ້ ໃນວຽກງານອັນຍິ່ງໃຫຍ່ຂອງພຣະເຈົ້ານີ້.

ເຫດຜົນຫລັກທີ່ພຣະເຈົ້າປະທານໃຫ້ສ້າງພຣະວິຫານທີ່ເຄື່ອນຍ້າຍນີ້ໄດ້ ແມ່ນຍ້ອນພຣະປະສົງຂອງພຣະອົງທີ່ຈະສະຖິດຢູ່ທ່າມກາງປະຊາຊົນ ຂອງພຣະອົງ (ອພຍ. 25:8). ພຣະປະສົງນີ້ກາຍເປັນຈິງ ໃນການສະເດັດ ມາເກີດເປັນບຸກຄົນ ຂອງພຣະຄຣິສ, ແລະ ຈະສຳເລັດບໍຣິບູນ ໃນຊ່ວງ ເວລາທີ່ພວກເຮົາທຸກຄົນໄດ້ຢູ່ກັບພຣະອົງໃນໂລກໃບໃໝ່.









**ການຈັດຕຽມ:**

- ວັນສະບາໂຕ (ອພຍ 35:1-3)
- ການຖວາຍດ້ວຍໃຈສະໝັກ (ອພຍ 35:4-36:7)

**ຫໍເຕັນສັກສິດ:**

- ການກໍ່ສ້າງ (ອພຍ 36:8-39:43)
- ການອຸທິຖວາຍ(Exodus 40:1-38)

**ຫໍເຕັນໃນລັກສະນະອື່ນ:**

- ພຣະເຢຊູ ແລະ ນະຄອນເຢຣູຊາເລັມໃໝ່





# ການຈັດຕຽມ



# ວັນສະບາໂຕ

"ຈົ່ງເຮັດວຽກໃນ 6 ວັນ, ແຕ່ໃນວັນທີ 7 ໃຫ້ພວກເຈົ້າຍຶດຖືເປັນວັນສັກສິດ ເປັນວັນສຳຄັນຂອງການພັກຜ່ອນທີ່ອຸທິດຖວາຍແກ່ອົງພຣະຜູ້ເປັນເຈົ້າ" (ອພຍ 35:2)

ຫລັງຈາກໄດ້ສຳພັດກັບສະຫງ່າຣາສີຂອງພຣະເຈົ້າແລ້ວ, ໂມເຊໄດ້ຖ່າຍທອດສິ່ງຕ່າງໆ ໃຫ້ກັບປະຊາຊົນ "ໃນສິ່ງທີ່ພຣະເຈົ້າໄດ້ສັ່ງ" (ອພຍ. 35:1, 4). ຄຳສັ່ງເຫລົ່ານີ້ລວມເຖິງຄວາມສຳພັນຂອງພວກເຂົາກັບພຣະເຈົ້າ (ວັນສະບາໂຕ) ແລະຄວາມສຳພັນຢູ່ທີ່ (ຫໍເຕັນ).

ພຣະເຈົ້າໄດ້ກຳນົດວັນສະບາໂຕໃຫ້ເປັນຊ່ວງເວລາທີ່ພິເສດເພື່ອໃຫ້ເຮົາມີຄວາມສຸກກັບການຢູ່ຮ່ວມກັບພຣະອົງໃນວັນສະບາໂຕ (ປຖມກ. 2:1-3; ອພຍ. 20:11), ແລະ ພຣະອົງກໍ່ໄດ້ເຕືອນຊາວອິດສະຣາເອນເຖິງເລື່ອງນີ້ ກ່ອນທີ່ຈະມອບພຣະບັນຍັດສິບປະການໃຫ້ແກ່ພວກເຂົາ (ອພຍ. 16:22-29).





ວັນສະບາໂຕເຕືອນໃຈພວກເຮົາວ່າ ພຣະເຈົ້າຊົງເປັນພຣະຜູ້ສ້າງ ແລະ ເປັນພຣະຜູ້ໄຖ່ຂອງພວກເຮົາ (ພບຍສ. 5:15), ແລະ ນຳເຮົາໄປສູ່ອະນາຄົດທີ່ເຮົາຈະຢູ່ຮ່ວມກັບພຣະອົງຕະຫລອດນິຣັນ (ອຊຢ. 66:22-23).



# ການຖວາຍດ້ວຍໃຈສະໝັກ

“ຈົ່ງນຳເຄື່ອງຂອງມາຖວາຍແກ່ອົງພຣະຜູ້ເປັນເຈົ້າ. ຜູ້ໃດເຕັມໃຈໃຫ້ ຈົ່ງນຳສິ່ງເຫລົ່ານີ້ມາຄື: ຄຳ, ເງິນ, ທອງສຳຣິດ;ຜູ້ໃດທີ່ມີສະຕິປັນຍາໃນທ່າມກາງພວກເຈົ້າ ໃຫ້ຜູ້ນັ້ນເຮັດສິ່ງທີ່ພຣະຜູ້ເປັນເຈົ້າສັ່ງໄວ້” (ອພຍ 35:5,10)







ມີສອງວິທີໃນການຊ່ວຍສ້າງຫໍເຕັນ: ບໍຣິຈາກຊັບສິນ ແລະ ເປັນແຮງງານ

ມີການນຳໃຊ້ທອງຄຳຫລາຍກວ່າໜຶ່ງຕັນ, ປະມານ 3.75 ຕັນຂອງເງິນ, ແລະປະມານ 2.5 ຕັນຂອງທອງສຳຣິດ, ລວມໄປເຖິງນຳໃຊ້ໄມ້ ແລະ ຜ້າຕ່າງໆເປັນຈຳນວນຫລາຍ (ອພຍ. 38:21-31).

ສິ່ງທັງໝົດນີ້ມາຈາກໃສ? ສ່ວນໃຫຍ່ແມ່ນເອົາມາຈາກປະເທດເອຢິບຕອນພວກເຂົາເດີນທາງອອກຈາກທີ່ນັ້ນ (ອພຍ. 11:2).

ນອກຈາກນີ້, ຍັງມີວຽກຂອງຊ່າງປັ້ນ, ຊ່າງຍິບເຄື່ອງ, ຊ່າງໄມ້, ຊ່າງແກະສະຫລັກ, ຊ່າງອັນຍຳມະນີ ແລະ ຊ່າງອື່ນໆ.

ທຸກໆຄົນແມ່ນມີຄວາມເຕັມໃຈທີ່ຈະຊ່ວຍ ເບຊາເລນ, ໂອໂຮລີອາບ ແລະ ຊ່າງຄົນອື່ນໆອີກ. ເຄື່ອງຖວາຍຫລາຍຈົນຕ້ອງຂໍໃຫ້ໂມເຊເຊົານຳເຄື່ອງຖວາຍນັ້ນມາຖວາຍຕື່ມອີກ (ອພຍ. 36:3-7).

ເພື່ອໃຫ້ວຽກງານນີ້ສຳເລັດ, ພຣະວິນຍານບໍຣິສຸດຊົງປະທານສະຕິປັນຍາໃຫ້ກັບຄົນອື່ນໆອີກ (ອພຍ. 35:30–36:2). ໃນທຳນອງກັນ, ພຣະອົງຍັງປະທານສິ່ງທີ່ຈຳເປັນໃຫ້ແກ່ທຸກໆຄົນທີ່ຮ່ວມມືໃນວຽກງານຂອງພຣະເຈົ້າ





“ພຣະເຈົ້າຊົງໄດ້ປະທານຂອງຂວັນອັນ
ປະເສີດໄວ້ໃຫ້ກັບຜູ້ຊາຍແລະຜູ້ຍິງ.
ແຕ່ລະຄົນກໍ່ໄດ້ຮັບຂອງປະທານທີ່ແຕກຕ່າງ
ກັນໄປ. ບໍ່ແມ່ນວ່າທຸກຄົນຈະມີຄວາມ
ເຂັ້ມແຂງ ຫລື ຄວາມຮູ້ທີ່ຄືກັນ. ແຕ່ລະຄົນ
ຕ້ອງໃຊ້ຂອງປະທານທີ່ຕົນເອງມີເພື່ອຮັບໃຊ້
ວຽກງານຂອງອົງພຣະຜູ້ເປັນເຈົ້າ. ຜູ້ຮັບໃຊ້
ທີ່ຊື່ສັດ ຍ່ອມໃຊ້ສິ່ງທີ່ຕົນໄດ້ຮັບນັ້ນຢ່າງ
ຊານສະຫລາດ”

EGW (The Upward Look , December 31)


ຫໍເຕັນ



# ການກໍ່ສ້າງ

“ແລ້ວໂມເຊກໍ່ກວດເບິ່ງທຸກໆສິ່ງ ແລະ ເຫັນວ່າພວກເຂົາເຮັດຕາມທີ່ອົງພຣະຜູ້ເປັນເຈົ້າໄດ້ສັ່ງໄວ້ທຸກປະການ, ດັ່ງນັ້ນໂມເຊຈຶ່ງອວຍພອນພວກເຂົາ” (ອພຍ 39:43)



## ອົງປະກອບໃດແດ່ທີ່ຈຳເປັນສຳລັບການປະຕິບັດງານ ແລະ ໜ້າທີ່ໃນຫໍເຕັນ?



ຫໍເຕັນ (ບໍຣິສຸດ ແລະ ບໍຣິສຸດທີ່ສຸດ)



ຫີບພັນທະສັນຍາທອງຄຳ



ໂຕະເຂົ້າຈີ່



ຕະກຽງ



ແທ່ນເຜົາເຄື່ອງຫອມ



ແທ່ນເຜົາຖວາຍບູຊາ





ອ່າງທອງຄຳ



ຜ້າມ່ານ, ຜ້າກັ້ງ



ຊຸດເອໂຟດ



ເຄື່ອງອັນຍຳມະນີ



ຊຸດຄຸມຍາວ

# ການກໍ່ສ້າງ

ເມື່ອສ້າງພຣະວິຫານແລ້ວ(ຫໍເຕັນແລະເດີ່ນ) ໄດ້ເປັນສະຖານທີ່ປະກອບພິທີກຳສອງແບບທີ່ແຕກຕ່າງກັນຄື: ປະຈຳມື້ ແລະ ປະຈຳປີ. ເມື່ອນຳເອົາພິທີທັງສອງມາລວມກັນເຮົາຈະເຫັນວ່າ:





- ພຣະເຈົ້າຊົງກຽດຊັງຄວາມບາບ
- ພຣະອົງຊົງຊ່ວຍຄົນບາບ
- ພຣະອົງຈະຊົງທຳລາຍຄວາມຊົ່ວ
- ພຣະອົງສັນຍາເຖິງຄວາມຈະເລີນໃນອະນາຄົດ

ຜ່ານການຖວາຍບູຊາປະຈຳວັນ, ພຣະເຈົ້າຊົງສະແດງໃຫ້ເຫັນວິທີທີ່ພຣະອົງຊົງໃຫ້ອະໄພຄົນບາບ ໂດຍພຣະຄຸນ: ນັ້ນກໍ່ຄືຄວາມຕາຍຂອງສັດ, "ລູກແກະຂອງພຣະເຈົ້າຜູ້ຊົງຮັບເອົາບາບກຳຂອງມະນຸດສະໂລກໄປເສຍ". (ຢຮ. 1:29).

ໂດຍການຖວາຍບູຊາປະຈຳປີ (ວັນແຫ່ງການໄຖ່ບາບ), ພຣະເຈົ້າຊົງສະແດງໃຫ້ເຫັນວ່າພຣະອົງຈະຊົງຂະຈັດຄວາມບາບອອກໄປຈາກຈັກກະວານແບບໃດ, ແລະ ຊົງສະແດງໃຫ້ເຫັນຈຸດຈົບຂອງບັນຫາອັນຊົ່ວຮ້າຍນັ້ນ (ພສສ. 73:17).

ຫໍເຕັນຍັງເປັນສະຖານທີ່ນະມັດສະການພຣະເຈົ້າ, ສັນລະເສີນພຣະອົງ ແລະ ສະແດງຄວາມກະຕັນຍູຕໍ່ພຣະອົງ



# ການອຸທິດຖວາຍ

“ຕໍ່ມາເມກໄດ້ມາປົກຄຸມຫໍເຕັນ ແລະ ແສງສຸກໃສແຫ່ງສະຫງ່າຣາສີຂອງອົງພຣະຜູ້ເປັນເຈົ້າ” (ອພຍ 40:34)





ພຣະທຳອົບພະຍົບຈົບລົງໂດຍການອຸທິດສະຖານສັກສິດ. ແລະ ບຸກຄົນສຳຄັນຂອງບົດນີ້ບໍ່ຕ້ອງສົງໄສເລີຍວ່າແມ່ນໃຜ, ຜູ້ນັ້ນກໍຄືພຣະເຈົ້າ, ຜູ້ທີ່ຊົງເຕີມເຕັມທຸກສິ່ງໂດຍການປະທັບອັນສະຫງ່າຣາສີຂອງພຣະອົງ(ອພຍ. 40:34). ການປະທັບຂອງພຣະອົງນັ້ນຍັງຄົງດຳເນີນຕໍ່ໄປໃນຫໍເຕັນ ແລະ ໃນພຣະທີ່ນັ່ງຂອງພຣະອົງ *Shekinah*.

ຫລັງຈາກເຮັດວຽກມາຫລາຍເດືອນ, ຫໍເຕັນກໍ່ຖືກສ້າງຂຶ້ນໃນວັນທີໜຶ່ງຂອງເດືອນທຳອິດຂອງປີທີສອງ ຫລັງຈາກທີ່ຊາວອິດສະຣາເອນອອກຈາກເອຢິບ (ອພຍ. 40:2, 17). ທຸກໆສິ່ງຖືກຈັດວາງຢ່າງເປັນລະບຽບ (ຫີບພັນທະສັນຍາ, ຜ້າມ່ານ, ໂຕະ, ຕະກຽງ, ແທ່ນບູຊາທອງຄຳ, ແທ່ນບູຊາທີ່ເຮັດດ້ວຍທອງສຳຣິດ, ອ່າງ), ແລະ ການອຸທິດຖວາຍ (ອພຍ. 40:9).



ໃນທີ່ສຸດ, ອາໂຣນແລະບຸດຊາຍຂອງລາວກໍສວມຊຸດປະໂຣຫິດ ແລະ ໄດ້ຮັບການເຈີມສຳລັບພັນທະກິດຂອງພວກເຂົາ (ອພຍ. 40:12-15).



EGW (Patriarchs and Prophets, p. 349)

“ບໍ່ມີພາສາໃດໆທີ່ສາມາດບັນລະຍາຍຄວາມຈະເລີນຮຸ່ງເຮືອງຂອງສິ່ງທີ່ປາກົດຢູ່ໃນພຣະວິຫານໄດ້, ຝາຜະໜັງທີ່ເຄືອບທອງສະທ້ອນແສງຈາກທຽນທອງຄຳ, ຜ້າມ່ານທີ່ປັກຢ່າງປານີດຊ່າງງົດງາມ, ໂຕະ ແລະ ແທ່ນບູຊາທີ່ສ່ອງປະກາຍລະຍິບລະຍັບດ້ວຍທອງຄຳ. ທາງເທິງຂອງຜ້າມ່ານຊັ້ນທີສອງ ແມ່ນຫີບແຫ່ງພັນທະສັນຍາອັນສັກສິດພ້ອມຮູບເຄຣູບອັນລຶກລັບ ແລະ ເໜືອຂຶ້ນໄປກວ່ານັ້ນມີລັດສະໝີພາບອັນສັກສິດເຊິ່ງເປັນການສະແດງອອກທີ່ເບິ່ງເຫັນໄດ້ເຖິງການປະທັບຢູ່ຂອງພຣະເຈົ້າຢາເວ; ເຊິ່ງຈະເປັນພາບສະທ້ອນສະຫງ່າຣາສີຂອງພຣະວິຫານໃນເບື້ອງເທິງສະຫວັນ ແລະ ເປັນສູນກາງອັນຍິ່ງໃຫຍ່ຂອງງານເພື່ອການໄຖ່ບາບຂອງມະນຸດ.”


ທໍເຕັນໃນລັກສະນະອື່ນໆ
©STEVE CREITZ

# ພຣະເຢຊູຄຣິສ ແລະ ນະຄອນເຢຣູຊາເລັມໃໝ່

“ພຣະທຳໄດ້ຊົງບັງເກີດເປັນມະນຸດ ແລະ ອາໄສຢູ່ທ່າມກາງເຮົາທັງຫລາຍ” (ຢຮ 1:14a)

“ຂ້າພະເຈົ້າໄດ້ຍິນສຽງດັງອອກມາຈາກພຣະຣາຊບັນລັງ ແລະ ກ່າວວ່າ: ເບິ່ງແມ ທີ່ສະຖິດຂອງພຣະເຈົ້າກໍ່ຢູ່ກັບມະນຸດແລ້ວ ພຣະອົງຈະສະຖິດຢູ່ກັບພວກເຂົາ ແລະ ພວກເຂົາກໍ່ຈະເປັນໄພ່ພົນຂອງພຣະອົງ ພຣະເຈົ້າເອງສະຖິດຢູ່ກັບພວກເຂົາ ແລະ ຈະຊົງເປັນພຣະເຈົ້າຂອງພວກເຂົາ” (ພນມ 21:3)

ຢຮ 1:14 ກ່າວໄວ້ຢ່າງຈະແຈ້ງວ່າພຣະເຢຊູຊົງເກີດເປັນມະນຸດ “ສະຫງ່າຣາສີ” (ຊົງເປັນສະຫງ່າຣາສີ) ທ່າມກາງພວກເຮົາ. ໂດຍການສະເດັດມາເກີດເປັນມະນຸດ, ພຣະເຢຊູຜູ້ຊົງດຳຣົງຢູ່ນິຣັນດອນ ຊົງສະໜອງພຣະປະສົງຂອງພຣະອົງໃນການທີ່ຈະຢູ່ທ່າມກາງພວກເຮົາ ແລະ ຊົງເປັນເອມານູເອນ ພຣະເຈົ້າຢູ່ກັບພວກເຮົາ (ມທ. 1:23).









ໂດຍພຣະວິນຍານບໍຣິສຸດ ພຣະເຈົ້າຍັງຄົງສະຖິດຢູ່ກັບພວກເຮົາໃນວັນນີ້(ມທ. 18:20; 1ຄຣທ. 3:16).

ແຕ່ວັນນັ້ນຈະມາເຖິງ ເມື່ອພວກເຮົາຈະໄດ້ຢືນຢູ່ໜ້າຕໍ່ໜ້າກັບພຣະເຈົ້າຂອງພວກເຮົາ ໃນຫໍເຕັນອັນສັກສິດທີ່ພຣະອົງຊົງຈັດຕຽມໄວ້ສຳລັບພວກເຮົາ ນັ້ນກໍ່ຄືນະຄອນເຢຣູຊາເຣັມໃໝ່ (ພນມ. 21:3).

ສິ່ງນີ້ຈະເກີດຂຶ້ນເມື່ອແຜນແຫ່ງຄວາມລອດພົ້ນນັ້ນ ສຳເລັດສົມບູນ ແລະ ຄວາມຊົ່ວຮ້າຍຖືກກຳຈັດໃຫ້ໝົດສິ້ນໄປ

EGW (The Desire of Ages, p. 23)

“ພຣະເຈົ້າຊົງບັນຊາໂມເຊສຳລັບຊາວອິດສະຣາເອນວ່າ, ”ຈົ່ງໃຫ້ພວກເຂົາສ້າງຫໍເຕັນສຳລັບເຮົາ; ເພື່ອທີ່ເຮົາຈະໄດ້ຢູ່ທ່າມກາງພວກເຂົາ" (ອພຍ 25:8), ແລະ ພຣະອົງປະທັບຢູ່ໃນສະຖານນະມັດສະການ ທ່າມກາງປະຊາຊົນຂອງພຣະອົງ. ຕະຫລອດການເດີນທາງອັນອິດເມື່ອຍໃນຖິ່ນແຫ້ງແລ້ງທຸລະກັນດານນັ້ນ ສັນຍາລັກແຫ່ງການສະຖິດຢູ່ຂອງພຣະເຈົ້າທ່າມກາງພວກເຂົາໄດ້ປາກົດຂຶ້ນເລື້ອຍໆ ເຖິງວ່າພວກເຂົາຈະຮູ້ສຶກອ່ອນແຮງກໍ່ຕາມ.. ພຣະອົງຊົງກາງເຕັນໄວ້ທາງຂ້າງເຕັນຂອງມະນຸດ ເພື່ອເຮັດໃຫ້ມະນຸດຄຸ້ນເຄີຍກັບລັກສະນະ ແລະ ສະຫງ່າຣາສີອັນສັກສິດຂອງພຣະອົງ.”